ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

594

ກະຊວງສຶກສາທິການ ແລະ ກິລາ
ຄະນະກຳມາທິການແຫ່ງຊາດ
ເພື່ອການພັດທະນາຊັບພະຍາກອນມະນຸດ

ເລກທີ /ສສກ.ຄຊພຊ
ນະຄອນຫຼວງວຽງຈັນ, ວັນທີ 28 ມິຖຸນາ 2022

# ມະຕິ

## ກອງປະຊຸມສະໄໝສາມັນຄົບຄະນະ ຄັ້ງທີ X
## ຂອງຄະນະກຳມາທິການແຫ່ງຊາດເພື່ອການພັດທະນາຊັບພະຍາກອນມະນຸດ

ກອງປະຊຸມສະໄໝສາມັນຄົບຄະນະ ຄັ້ງທີ X ຂອງຄະນະກຳມາທິການແຫ່ງຊາດເພື່ອການພັດທະນາຊັບພະຍາກອນມະນຸດ (ຄຊພຊ) ໄດ້ໄຂຂຶ້ນໃນວັນຈັນ ວັນທີ 06 ມິຖຸນາ 2022, ທີ່ສະຖາບັນຂົງຈື້, ມະຫາວິທະຍາໄລແຫ່ງຊາດ, ນະຄອນຫຼວງວຽງຈັນ ພາຍໃຕ້ການເປັນປະທານຂອງ ທ່ານ ຣສ. ປອ. ພຸດ ສິມມາລາວົງ, ລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ, ປະທານຄະນະກຳມາທິການແຫ່ງຊາດເພື່ອການພັດທະນາຊັບພະຍາກອນມະນຸດ ໂດຍມີບັນດາທ່ານຮອງປະທານ ຄຊພຊ, ກຳມະການຂອງ ຄະນະກຳມາທິການແຫ່ງຊາດເພື່ອການພັດທະນາຊັບພະຍາກອນມະນຸດ ແລະ ຄະນະກຳມະການເພື່ອການພັດທະນາຊັບພະຍາກອນມະນຸດຂອງກະຊວງ/ອົງການທຽບເທົ່າກະຊວງ ແລະ ແຂວງ/ນະຄອນຫຼວງ ແລະ ຄະນະຮັບຜິດຊອບກອງປະຊຸມເຂົ້າຮ່ວມເຊິ່ງໜ້າ ລວມທັງໝົດ 130 ທ່ານ, ຍິງ 24 ທ່ານ, ຜ່ານທາງອອນລາຍ 163 ທ່ານ, ຍິງ 62 ທ່ານ.

ກອງປະຊຸມໄດ້ຮັບຟັງການລາຍງານກ່ຽວກັບ 3 ເນື້ອໃນຫຼັກຄື: (1) ການລາຍງານສະຫຼຸບການຈັດຕັ້ງປະຕິບັດມະຕິ ຄຊພຊ ຄັ້ງທີ IX ປະຈຳປີ 2021 ແລະ ແຜນການຈັດຕັ້ງປະຕິບັດ ປະຈຳປີ 2022, (2) ບົດລາຍງານການທົບທວນການຈັດຕັ້ງປະຕິບັດຍຸດທະສາດພັດທະນາຊັບພະຍາກອນມະນຸດແຫ່ງຊາດ ຮອດປີ 2025 ແລະ ແຜນປະຕິບັດງານ ທີ່ຜ່ານມາ (2016-2020) ແລະ ແຜນປະຕິບັດງານ 5 ປີ (2021-2025) ໃນຕໍ່ໜ້າ, (3) ບົດລາຍງານການເພີ່ມທະວີການພັດທະນາຊັບພະຍາກອນມະນຸດໃຫ້ມີຄຸນນະພາບສູງຂຶ້ນ ສາມາດຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງການພັດທະນາປະເທດຊາດໃນໄລຍະໃໝ່.

ກອງປະຊຸມໃນຄັ້ງນີ້ ໄດ້ຕ້ອນຮັບ ທ່ານ ສຈ.ປອ ກິແກ້ວ ໄຂຄຳພິທູນ, ຮອງນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ເປັນກຽດເຂົ້າຮ່ວມ ແລະ ໂອ້ລົມໃນກອງປະຊຸມ ຊຶ່ງທ່ານໄດ້ມີທິດຊີ້ນຳ ດັ່ງນີ້:

1) ໃຫ້ເອົາໃຈໃສ່ ສຶກສາອົບຮົມວຽກງານແນວຄິດການເມືອງ, ຄຸນສົມບັດສິນທຳປະຕິວັດ ເພື່ອສ້າງຄົນລາວໂດຍສະເພາະກຸ່ມແຖວພະນັກງານນຳພາ, ຄຸ້ມຄອງ, ຄູອາຈານ ແລະ ນັກຮຽນ-ນັກສຶກສາ ໃຫ້ມີຄຸນທາດການເມືອງທີ່ໜັກແໜ້ນ, ຄຸນສົມບັດສິນທຳປະຕິວັດ, ສະຕິຊາດ, ຄວາມຈົງຮັກພັກດີຕໍ່ລະບອບການເມືອງ, ສຸຂະພາບ



สแกนด้วย CamScanner

ແຂງແຮງ ພ້ອມທັງຍົກລະດັບຄຸນນະພາບ ຂອງການສຶກສາ, ທັກສະສີມືແຮງງານ ແລະ ໃຫ້ມີການແບ່ງຂັ້ນຄຸ້ມຄອງ ທີ່ຈະແຈ້ງ;

2) ມອບໃຫ້ ຄະນະກໍາມາທິການແຫ່ງຊາດ ເພື່ອການພັດທະນາຊັບພະຍາກອນມະນຸດ (ຄຊພຊ) ສຸມໃສ່ ການຄົ້ນຄວ້າ ຮ່າງມະຕິ ກ່ຽວກັບບົດລາຍງານການເພີ່ມທະວີການພັດທະນາຊັບພະຍາກອນມະນຸດໃຫ້ມີຄຸນນະພາບສູງຂຶ້ນ ສາມາດຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງການພັດທະນາປະເທດຊາດໃນໄລຍະໃໝ່ ໃຫ້ມີຈຸດສຸມ ແລະ ສາມາດຈັດຕັ້ງປະຕິບັດໄດ້; ຕ້ອງມີການຄົ້ນຄວ້າລົງເລິກປະເດັນບັນຫາຕ່າງໆ ແລະ ກໍານົດມາດຕະການແກ້ໄຂ ທີ່ສອດຄ່ອງກັບແຜນທີ່ວາງໄວ້;

3) ການພັດທະນາຊັບພະຍາກອນມະນຸດ ຕ້ອງກວມເອົາຮອບວຽນຂອງມະນຸດ ຄືຕັ້ງແຕ່ເຍົາໄວ ຈົນຮອດໄວອາວຸໂສ; ຕ້ອງວາງຄາດໝາຍສໍາລັບການພັດທະນາຊັບພະຍາກອນມະນຸດໃຫ້ມີຄຸນນະພາບ ແລະ ສາມາດຕອບສະໜອງໄດ້ ຍຸກອຸດສາຫະກໍາ 4.0; ຫາກມີຄວາມຈໍາເປັນຕ້ອງປະຕິຮູບການສຶກສາ ກໍໃຫ້ມີການປະຕິຮູບທີ່ສອດຄ່ອງ;

4) ຫັນເອົາວຽກງານການສ້າງເປັນນະວັດຕະກໍາ ໄປສູ່ການສຶກສາ ໃຫ້ເປັນຮູບປະທໍາ; ໃຫ້ມີການຄົ້ນຄວ້າ, ພັດທະນາໃຫ້ກາຍເປັນສິນຄ້າ ແລະ ສ້າງລາຍຮັບ ຈາກນະວັດຕະກໍາເຫຼົ່ານັ້ນ ເພື່ອປະກອບສ່ວນ ເຂົ້າໃນການພັດທະນາປະເທດຊາດ;

5) ໃຫ້ມີລະບົບການຕິດຕາມ, ປະເມີນຜົນ ແລະ ລາຍງານ ຜົນການຈັດຕັ້ງປະຕິບັດຍຸດທະສາດພັດທະນາຊັບພະຍາກອນມະນຸດ ຢ່າງເປັນປົກກະຕິ ແລະ ມີການປັບປຸງໃຫ້ສອດຄ່ອງກັບສະພາບການຕົວຈິງ ໃນແຕ່ລະໄລຍະ;

6) ຮີບຮ້ອນດໍາເນີນການປະເມີນ ແລະ ວາງແຜນການກໍ່ສ້າງ ແລະ ຍົກລະດັບພະນັກງານ, ຊັບພະຍາກອນມະນຸດໃນຂັ້ນຂອງຕົນ; ການວາງແຜນກໍໃຫ້ສອດຄ່ອງກັນລະຫວ່າງແຜນພັດທະນາຂອງຂະແໜງການ ລວມທັງແຜນເງິນ ແລະ ແຜນຄົນ;

ຜ່ານການຮັບຟັງການຊີ້ນໍາຂອງທ່ານ ສຈ.ປອ ກິແກ້ວ ໄຂຄໍາພິທູນ, ຮອງນາຍົກລັດຖະມົນຕີ ແຫ່ງ ສປປ ລາວ, ການລາຍງານ, ຄົ້ນຄວ້າ, ພິຈາລະນາ, ປະກອບຄໍາເຫັນຢ່າງຕັ້ງໜ້າ, ກົງໄປກົງມາ ແລະ ສ້າງສັນ ຂອງບັນດາທ່ານຜູ້ແທນກອງປະຊຸມ ຕໍ່ເນື້ອໃນຂ້າງເທິງນັ້ນ, ກອງປະຊຸມ ໄດ້ມີຄວາມເປັນເອກະພາບຮັບຮອງເອົາເປັນມະຕິກອງປະຊຸມສະໄໝສາມັນຄົບຄະນະ ຄັ້ງທີ X ຂອງຄະນະກໍາມາທິການແຫ່ງຊາດເພື່ອການພັດທະນາຊັບພະຍາກອນມະນຸດ (ຄຊພຊ) ດັ່ງນີ້:

1. ຄະນະກໍາມາທິການແຫ່ງຊາດ ເພື່ອການພັດທະນາຊັບພະຍາກອນມະນຸດ ເຫັນດີໂດຍພື້ນຖານຮັບຮອງເອົາບັນດາເອກະສານ ດັ່ງລຸ່ມນີ້:

   1.1 ບົດສະຫຼຸບການຈັດຕັ້ງປະຕິບັດມະຕິ ກອງປະຊຸມສະໄໝສາມັນຄົບຄະນະ ຄັ້ງທີ IX ຂອງ ຄຊພຊ ປະຈໍາປີ 2021 ແລະ ແຜນການຈັດຕັ້ງປະຕິບັດ ປະຈໍາປີ 2022, ໂດຍມອບໃຫ້ກອງເລຂາ ຄຊພຊ ນໍາໄປປັບປຸງຕາມຄໍາເຫັນຂອງຜູ້ແທນກອງປະຊຸມ;

   1.2 ບົດລາຍງານການທົບທວນການຈັດຕັ້ງປະຕິບັດຍຸດທະສາດພັດທະນາຊັບພະຍາກອນມະນຸດແຫ່ງຊາດຮອດປີ 2025 ແລະ ແຜນປະຕິບັດງານ 2016-2020, ແລະ ແຜນປະຕິບັດງານຍຸດທະສາດພັດທະນາຊັບພະຍາກອນມະນຸດແຫ່ງຊາດ 5 ປີ (2021-2025);



สแกนด้วย CamScanner

1.3 ປັດລາຍງານການເພີ່ມທະວີການພັດທະນາຊັບພະຍາກອນມະນຸດໃຫ້ມີຄຸນນະພາບສູງຂຶ້ນ ສາມາດຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງການພັດທະນາປະເທດຊາດໃນໄລຍະໃໝ່;

2. ໃຫ້ຄະນະກຳມະການພັດທະນາຊັບພະຍາກອນມະນຸດ ຂອງ ກະຊວງ/ອົງການທຽບເທົ່າກະຊວງ ສືບຕໍ່ປະກອບຂໍ້ມູນໃສ່ແຜນປະຕິບັດງານຍຸດທະສາດພັດທະນາຊັບພະຍາກອນມະນຸດແຫ່ງຊາດ 5 ປີ (2021-2025) ແລ້ວສົ່ງໃຫ້ ກອງເລຂາ ຄຊພຊ ພາຍໃນ ວັນທີ 30 ມິຖຸນາ 2022;

3. ມອບໃຫ້ຄະນະກຳມະການພັດທະນາຊັບພະຍາກອນມະນຸດຂອງກະຊວງ/ອົງການທຽບເທົ່າກະຊວງ ແລະ ແຂວງ/ນະຄອນຫຼວງ ສືບຕໍ່ສ້າງແຜນຍຸດທະສາດພັດທະນາຊັບພະຍາກອນມະນຸດ ໃຫ້ສຳເລັດ; ຊີ້ນຳ-ນຳພາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດວຽກງານການພັດທະນາຊັບພະຍາກອນມະນຸດ ຢ່າງໃກ້ຊິດ ແລະ ໃຫ້ນຳວຽກງານດັ່ງກ່າວເຂົ້າໃນແຜນການ, ແຜນງານ ແລະ ໂຄງການ ໃຫ້ເປັນວຽກປົກກະຕິ ຂອງຂະແໜງການ;

4. ມອບໃຫ້ຄະນະກຳມະການພັດທະນາຊັບພະຍາກອນມະນຸດ ຂອງກະຊວງ/ອົງການທຽບເທົ່າກະຊວງ ແລະ ແຂວງ/ນະຄອນຫຼວງ ມີການຕິດຕາມ, ປະເມີນຜົນ ແລະ ເອົາວຽກງານພັດທະນາຊັບພະຍາກອນມະນຸດ ເຂົ້າໃນກົນໄກການເຮັດວຽກຢ່າງປົກກະຕິ ໃນການລາຍງານປະຈຳເດືອນ, ປະຈຳໄຕມາດ, ປະຈຳປີ ຂອງພາກສ່ວນຕົນ ແລະ ມີກອງປະຊຸມຄົບຄະນະ ຢ່າງໜ້ອຍ 2 ຄັ້ງຕໍ່ປີ; ພ້ອມທັງ ຈັດສັນງົບປະມານ ໃຫ້ກອງເລຂາ ຂອງພາກສ່ວນຕົນ ເພື່ອຂັບເຄື່ອນວຽກງານດັ່ງກ່າວ;

5. ມອບໃຫ້ຄະນະກຳມາທິການແຫ່ງຊາດ ເພື່ອການພັດທະນາຊັບພະຍາກອນມະນຸດ ແຕ່ງຕັ້ງຄະນະວິຊາການສະເພາະ ເພື່ອຄົ້ນຄວ້າກ່ຽວກັບງົບປະມານທີ່ຕ້ອງການ, ແຫຼ່ງງົບປະມານ, ພ້ອມທັງກົນໄກ ໃນການນຳໃຊ້ ແລະ ຄຸ້ມຄອງ ງົບປະມານດັ່ງກ່າວ ສຳລັບວຽກງານຈຸດສຸມ ແລະ ບຸລິມະສິດຕ່າງໆ ທີ່ໄດ້ກຳນົດໃນແຜນການຈັດຕັ້ງປະຕິບັດຍຸດທະສາດການພັດທະນາຊັບພະຍາກອນມະນຸດແຫ່ງຊາດ ຮອດປີ 2025 ໄລຍະ 2021-2025 ເພື່ອນຳສະເໜີຕໍ່ລັດຖະບານ ພິຈາລະນາ;

6. ໃຫ້ຄະນະກຳມະການພັດທະນາຊັບພະຍາກອນມະນຸດ ຂອງກະຊວງ/ອົງການທຽບເທົ່າກະຊວງ, ແຂວງ/ນະຄອນຫຼວງດຳເນີນການທົບທວນຄືນພາລະບົດບາດ, ໜ້າວຽກ ແລະ ບຸກຄະລາກອນຂອງຕົນໂດຍສະເພາະກອງເລຂາ ເພື່ອປັບປຸງໃຫ້ສອດຄ່ອງກັບສະພາບການປະຕິບັດວຽກງານຕົວຈິງ, ແກ້ໄຂຂອດຂັ້ນການປະສານງານທີ່ຍັງບໍ່ທັນຄ່ອງຕົວ, ເພີ່ມທະວີການມີສ່ວນຮ່ວມຂອງພາກສ່ວນຕ່າງໆ ຜ່ານກົນໄກການປະສານງານພາຍໃນ ແລະ ກັບພາຍນອກໃຫ້ເປັນປົກກະຕິ;

7. ສຳລັບການຈັດຕັ້ງປະຕິບັດຍຸດທະສາດພັດທະນາຊັບພະຍາກອນມະນຸດ ປີ 2022, ມອບໃຫ້ກອງເລຂາຄະນະກຳມາທິການແຫ່ງຊາດ ເພື່ອການພັດທະນາຊັບພະຍາກອນມະນຸດ ສືບຕໍ່ຈັດຕັ້ງປະຕິບັດວຽກງານ ດັ່ງນີ້:

7.1 ດຳເນີນການປະເມີນຄວາມຕ້ອງການຝຶກອົບຮົມ ແລະ ສ້າງແຜນການຝຶກອົບຮົມ ກ່ຽວກັບວຽກງານພັດທະນາຊັບພະຍາກອນມະນຸດ ໃຫ້ແກ່ກອງເລຂາ ຂອງຄະນະກຳມະການພັດທະນາຊັບພະຍາກອນມະນຸດ ຂອງກະຊວງ/ອົງການທຽບເທົ່າກະຊວງ ແລະ ແຂວງ/ນະຄອນຫຼວງ ຮ່ວມກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອສະເໜີໃຫ້ ຄະນະກຳມາທິການແຫ່ງຊາດ ເພື່ອການພັດທະນາຊັບພະຍາກອນມະນຸດ ຮັບຮອງ;



สแกนด้วย CamScanner

7.2 ສືບຕໍ່ຄົ້ນຄວ້າ ແລະ ພັດທະນາ ຄູ່ມືການຈັດຕັ້ງປະຕິບັດຍຸດທະສາດພັດທະນາຊັບພະຍາກອນມະນຸດແຫ່ງຊາດ ຮອດປີ 2025 ໃຫ້ສຳເລັດ ໂດຍໃຫ້ມີການປະສານສົມທົບກັບ ບັນດາຄະນະກຳມະການພັດທະນາຊັບພະຍາກອນມະນຸດ ແລະ ຄູ່ຮ່ວມພັດທະນາເພື່ອລະດົມຂົນຂວາຍການສະໜັບສະໜູນທາງດ້ານວິຊາການ ແລະ ງົບປະມານ;

7.3 ຮ່ວມກັບຄະນະວິຊາການໃນການຄົ້ນຄວ້າ ແລະ ສ້າງແບບຈຳລອງການພະຍາກອນຕະຫຼາດແຮງງານຂອງ ແຂວງ/ນະຄອນຫຼວງ ດຳເນີນການທົບທວນ ແລະ ປັບປຸງເຄື່ອງມືຕ່າງໆ ສຳລັບແບບຈຳລອງການພະຍາກອນຕະຫຼາດແຮງງານ ຂັ້ນແຂວງ/ນະຄອນຫຼວງ ໃຫ້ສຳເລັດໃນປີ 2022;

7.4 ຄົ້ນຄວ້າ, ປຶກສາຫາລື ແລະ ປະສານສົມທົບກັບ ຄະນະກຳມະການພັດທະນາຊັບພະຍາກອນມະນຸດ ແລະ ບັນດານັກຊ່ຽວຊານທາງດ້ານຊັບພະຍາກອນມະນຸດ ໃນການກຳນົດພາລະບົດບາດ, ສິດ ແລະ ໜ້າທີ່, ບຸກຄະລາກອນ ປະກອບເຂົ້າໃນ ຄະນະວິຊາການໃນການສຶກສາ, ຄົ້ນຄວ້າວິໄຈ ແລະ ວາງແຜນວຽກງານທີ່ຕິດພັນກັບການພັດທະນາຊັບພະຍາກອນມະນຸດ ເພື່ອສະເໜີໃຫ້ ຄະນະກຳມາທິການແຫ່ງຊາດ ເພື່ອການພັດທະນາຊັບພະຍາກອນມະນຸດ ແຕ່ງຕັ້ງຄະນະດັ່ງກ່າວ ແລະ ໃຫ້ມີການຄົ້ນຄວ້າ-ວິໄຈ ລົງເລິກກ່ຽວກັບການພັດທະນາຊັບພະຍາກອນມະນຸດ ເພື່ອສຶກສາເຖິງບັນຫາຕ່າງໆໃຫ້ເຖິງຖອງ ເພື່ອທີ່ຈະສາມາດວາງແຜນ ແລະ ວາງມາດຕະການແກ້ໄຂໃຫ້ຖືກຕ້ອງ, ທັນການ ແລະ ສອດຄ່ອງກັບທິດທາງການພັດທະນາເສດຖະກິດ-ສັງຄົມ ຂອງຊາດ ໃນແຕ່ລະໄລຍະ;

7.5 ວາງແຜນ ແລະ ດຳເນີນການຖອດຖອນບົດຮຽນ ຮ່ວມກັບຄະນະກຳມະການພັດທະນາຊັບພະຍາກອນມະນຸດ ຂອງກະຊວງ/ອົງການທຽບເທົ່າກະຊວງ ແລະ ແຂວງ/ນະຄອນຫຼວງ ກ່ຽວກັບການເຜີຍແຜ່ຂະຫຍາຍຍຸດທະສາດ, ການສ້າງແຜນພັດທະນາຊັບພະຍາກອນມະນຸດ, ກົນໄກການເກັບກຳຂໍ້ມູນຕົວຊີ້ບອກ, ການປະສານງານ, ການລາຍງານ ແລະ ອື່ນໆ;

7.6 ເຜີຍແຜ່ ຜົນຂອງການທົບທວນການຈັດຕັ້ງປະຕິບັດຍຸດທະສາດການພັດທະນາຊັບພະຍາກອນມະນຸດແຫ່ງຊາດ ຮອດປີ 2025 ໄລຍະ 5 ປີຜ່ານມາ (2016-2020) ແລະ ແຜນປະຕິບັດງານການພັດທະນາຊັບພະຍາກອນມະນຸດ ສຳລັບ 5 ປີ (2021-2025) ;

7.7 ຈັດກອງປະຊຸມຄົ້ນຄວ້າ, ປຶກສາຫາລື ແລະ ສະເໜີນະໂຍບາຍຕ່າງໆ ທີ່ຈຳເປັນ ກ່ຽວກັບການດັດສົມຕະຫຼາດແຮງງານ ພ້ອມທັງເຜີຍແຜ່ຜົນຂອງການສຳຫຼວດນຳຮອຍນັກຮຽນມັດທະຍົມສຶກສາ ແລະ ການສຳຫຼວດວິສະຫະກິດ ໃຫ້ແກ່ສະຖາບັນການສຶກສາຕ່າງໆ, ຜູ້ສ້າງນະໂຍບາຍ ແລະ ມວນຊົນ;

7.8 ມອບໃຫ້ກອງເລຂາຄະນະກຳມາທິການແຫ່ງຊາດເພື່ອການພັດທະນາຊັບພະຍາກອນມະນຸດ ເປັນເຈົ້າການ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຄົ້ນຄວ້າ ແລະ ທົບທວນຄືນ ບັນດານະໂຍບາຍທຶນການສຶກສາຂອງລັດຖະບານ ແລະ ຕ່າງປະເທດ ເພື່ອນຳໃຊ້ທຶນດັ່ງກ່າວ ໃຫ້ເກີດຜົນປະໂຫຍດສູງສຸດ ເຂົ້າໃນການກໍ່ສ້າງນັກວິຊາການ ແລະ ຊ່ຽວຊານສະເພາະດ້ານ ທີ່ສອດຄ່ອງກັບຄວາມຕ້ອງການຂອງຂະແໜງການຕ່າງໆ ແລະ ສອດຄ່ອງກັບນະໂຍບາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ;



สแกนด้วย CamScanner

8. ຄະນະກຳມະການພັດທະນາຊັບພະຍາກອນມະນຸດ ຂອງກະຊວງ/ອົງການທຽບເທົ່າກະຊວງ ແລະ ແຂວງ/ນະຄອນຫຼວງ ສືບຕໍ່ປຸກລະດົມການຮ່ວມມື ແລະ ຊ່ວຍເຫຼືອທາງດ້ານວິຊາການ ແລະ ງົບປະມານ ນຳບັນດາຄູ່ຮ່ວມພັດທະນາ ເພື່ອສະໜັບສະໜູນບັນດາກິດຈະກຳຕ່າງໆ ທີ່ເປັນບຸລິມະສິດ;

9. ຊຸກຍູ້ ແລະ ສົ່ງເສີມ ໃຫ້ຄະນະກຳມະການພັດທະນາຊັບພະຍາກອນມະນຸດ ຂອງກະຊວງ/ອົງການທຽບເທົ່າກະຊວງ ແລະ ແຂວງ/ນະຄອນຫຼວງ ສາມາດດຳເນີນການຄົ້ນຄວ້າ, ວິເຄາະ-ວິໄຈຫົວຂໍ້/ຂົງເຂດ ທີ່ຕິດພັນກັບການພັດທະນາຊັບພະຍາກອນມະນຸດ ໃນຂົງເຂດຄວາມຮັບຜິດຊອບຂອງຕົນ ແລະ ໃຫ້ມີບົດຄົ້ນຄວ້າ ຢ່າງໜ້ອຍ 1 ບົດ ຕໍ່ປີ;

10. ກອງປະຊຸມຄະນະກຳມາທິການແຫ່ງຊາດເພື່ອການພັດທະນາຊັບພະຍາກອນມະນຸດຄັ້ງທີ XI ຈະຈັດຂຶ້ນພາຍໃນເດືອນມີນາ 2023.

ລັດຖະມົນຕີ

ປະທານຄະນະກຳມາທິການແຫ່ງຊາດ

ເພື່ອການພັດທະນາຊັບພະຍາກອນມະນຸດ

ຣສ.ປອ ພຸດ ສິມມາລາວົງ



สแกนด้วย CamScanner